# ນະໂຍບາຍ ແລະ ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີຄັ້ງທີ IX (2021-2025) ເພື່ອຄ້ຳປະກັນສະບຽງອາຫານ


**ນຳສະເໜີໂດຍ:** **ທ່ານ ສົມສະໄໝ ວົງທິລາດ**

ຮອງຫົວໜ້າພະແນກແຜນການ

ກົມແຜນການ ແລະ ການຮ່ວມມື

ກະຊວງກະສິກຳ ແລະ ປ່າໄມ້

# ເປົ້າໝາຍຄວາມໝັ້ນຄົງດ້ານອາຫານ ແລະ ໂພສະນາການ ສຸມໃສ່ການພັດທະນາ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9th NSEDP

## *ຜະລິດອາຫານ ເພື່ອໃຫ້ແນ່ໃຈວ່າມີອາຫານແຈກຢາຍສໍາລັບທຸກຄົນ*

- **ສຸມໃສ່ການຜະລິດເຂົ້າໃນ 10 ແຂວງເປົ້າໝາຍ** (ຫຼວງນໍ້າທາ, ບໍ່ແກ້ວ, ໄຊຍະບູລີ, ວຽງຈັນ, ນະຄອນຫຼວງ, ບໍລິຄໍາໄຊ, ຄໍາມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ຈໍາປາສັກ)
  - ✓ ຜະລິດເຂົ້າໃຫ້ໄດ້ໃນ 900,000 ຮຕ,
  - ✓ ຜົນຜະລິດໃຫ້ໄດ້ 2,5 ລ້ານໂຕນ ໃນປີ 2020
  - ✓ ຜະລິດເຂົ້າ 2.1 ລ້ານໂຕນ ສໍາລັບການບໍລິໂພກພາຍໃນ ແລະ 400,000 ໂຕນ ເປັນຄັງແຮໄວ້.
  - ✓ ຂະຫຍາຍຕາຂ່າຍຊົນລະປະທານ ຈາກ 315,374 ຮຕ ໃນປະຈຸບັນ ເປັນ 476,012 ຮຕ ໃນປີ 2020, ສະມັດຕະພາບຜະລິດ 4-5 ໂຕນ/ຮຕ.
- ເພີ້ມຜົນຜະລິດພືດອື່ນໆ
  - ✓ ສາລີຫວານ 228,000 ໂຕນ,
  - ✓ ມັນ ແລະ ທາດແປ້ງ 304,000 ໂຕນ
  - ✓ ໄມ້ໃຫ້ໝາກ 800,000 ໂຕນ
  - ✓ ຜັກ 1.5 ລ້ານ.
- **ເພີ່ມຜະລິດຕະພັນສັດ, ປາ ແລະ ສັດນໍ້າ**
  - ✓ ຜະລິດຕະພັນສັດເພີ້ມຂຶ້ນ 6%/ປີ ແລະ ປາ ແລະ ສັດນໍ້າ 8-10%/ປີ.
  - ✓ ຜະລິດຕະພັນຊີ້ນ, ໄຂ່ໃຫ້ໄດ້ 258,000ໂຕນ/ປີ ແລະ ສັດນໍ້າ 229,500 ໂຕນ/ປີ 2020.
- **ເພີ້ມລະດັບການບໍລິໂພກອາຫານທີ່ມີຄຸນຄ່າທາງດ້ານໂພສະນາການ**
  - ✓ ປະລິມານ Calorie ໃຫ້ໄດ້ 2,600–2,700 kcal/ຄົນ/ປີ ຈາກເຂົ້າ, ທາດແປ້ງ, ຊີ້ນ,ປາ ໄຂ່ ແລະ ນົມ.
  - ✓ ການບໍລິໂພກຊີ້ນປາ ແລະ ໄຂ່ ສະເລ່ຍຕໍ່ຫົວຄົນ 65 ກິໂລກາມ/ຄົນ/ປີ.

# “8+ 8” ຂົງເຂດນະໂຍບາຍທີ່ເປັນບູລິມະສິດ ຂອງຂະແໜງກະສິກຳໃນການຄໍ້າປະກັນສະບຽງອາຫານ

## 8 ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການປູກພືດ ຂອງ ສປປ ລາວ

1) ນະໂຍບາຍທີ່ດິນ ສໍາລັບການປູກພືດ
2) ນະໂຍບາຍປັດໃຈການຜະລິດ
3) ນະໂຍບາຍສົ່ງເສີມດ້ານຄຸນນະພາບ ແລະ ການປຸງແຕ່ງພືດ
4) ນະໂຍບາຍດ້ານການສົ່ງອອກ ແລະ ຜະລິດຕະພັນພືດ
5) ນະໂຍບາຍບຸກຄະລາກອນ ແລະ ຜູ້ອອກແຮງງານ
6) ນະໂຍບາຍຮັບປະກັນຄວາມສ່ຽງຕໍ່ການປູກພືດ
7) ນະໂຍບາຍສົ່ງເສີມການນໍາໃຊ້ເຕັກໂນໂລຊີກົນຈັກ ແລະ ອັດຕະໂນມັດ,
8) ນະໂຍບາຍດ້ານສິນເຊື່ ແລະ ການເຂົ້າເຖິງແຫຼ່ງທຶນ

## 8 ນະໂຍບາຍແຫ່ງຊາດ ວ່າດ້ວຍການສົ່ງເສີມການລ້ຽງສັດ ແລະ ສັດນໍ້າ ຂອງ ສປປ ລາວ

1) ນະໂຍບາຍກ່ຽວກັບທີ່ດິນສໍາລັບການລ້ຽງສັດ ແລະ ສັດນໍ້າ
2) ນະໂຍບາຍດ້ານພະລັງງານ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ
3) ນະໂຍບາຍການປະກັນຄວາມສ່ຽງ ຕໍ່ການລ້ຽງສັດ ແລະ ສັດນໍ້າ
4) ນະໂຍບາຍສົ່ງເສີມດ້ານຄຸນນະພາບຂອງຜະລິດຕະພັນສັດ ແລະ ສັດນໍ້າ
5) ນະໂຍບາຍ ສົ່ງເສີມດ້ານການຄ້າ ແລະ ການຕະຫຼາດ
6) ນະໂຍບາຍດ້ານແຮງງານ ແລະ ສະຫວັດດີການຕໍ່ຜູ້ລ້ຽງສັດ ແລະ ສັດນໍ້າ
7) ນະໂຍບາຍດ້ານບຸກຄະລາກອນດ້ານລ້ຽງສັດ, ສັດຕະວະແພດ ແລະ ປະມົງ
8) ນະໂຍບາຍດ້ານການເງິນ ແລະ ການເຂົ້າເຖິງແຫຼ່ງທຶນ

## 1. ວິໃສທັດ

" ຮັບປະກັນຄວາມໝັ້ນຄົງ ທາງດ້ານສະບຽງອາຫານ, ຜະລິດສິນຄ້າ ກະສິກຳທີ່ມີທ່າແຮງ, ພັດທະນາ ກະສິກຳສະອາດ, ປອດໄພ ແລະ ຍືນຍົງ ບົນພື້ນຖານການຫັນເປັນອຸດສະຫະກຳ ແລະ ທັນສະໄໝ ຕິດພັນກັບ ການພັດທະນາຊົນນະບົດ ເພື່ອປະກອບສ່ວນສ້າງພື້ນຖານເສດຖະກິດແຫ່ງຊາດ "

## 2. ທິດທາງໜ້າທີ່ລວມ

ແຜນພັດທະນາ ກະສິກຳ ປ່າໄມ້, ພັດທະນາຊົນນະບົດ 5 ປີ ຄັ້ງທີ IX (2021-2025) ແມ່ນສຸມທຸກກຳລັງແຮງເພື່ອຊຸກຍູ້ການຜະລິດກະສິກຳ ໃນຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ, ຜະລິດສິນຄ້າກະສິກຳໃຫ້ມີຄຸນນະພາບ ແລະ ຫຼາກຫຼາຍ; ປະຊາຊົນມີລາຍຮັບເພີ່ມຂຶ້ນ ເຮັດໃຫ້ຄວາມທຸກຍາກ ແລະ ຊີວິດການເປັນຢູ່ຊາວຊົນນະບົດໄດ້ຮັບການປັບປຸງດີຂຶ້ນ; ປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້ ໄດ້ຮັບການປົກປັກຮັກສາ, ພັດທະນາສ້າງມູນຄ່າເພີ່ມ ແລະ ລາຍຮັບເຂົ້າໃນເສດຖະກິດແຫ່ງຊາດ ໃຫ້ສູງຂຶ້ນ.

# ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີຄັ້ງທີ IX (2021-2025)

**ຄາດໝາຍຕົ້ນຕໍ:**

ຜະລິດສະບຽງອາຫານ ແລະ ການຜະລິດສິນຄ້າ ກະສິກຳ ທີ່ມີທ່າແຮງມີການຂະຫຍາຍຕົວ, ຫຼາກຫຼາຍ, ສະອາດ, ປອດໄພ, ປະຊາຊົນມີລາຍຮັບ ທັງຮັບປະກັນລະບົບນິເວດກະສິກຳຂອງທ້ອງຖິ່ນ ມີຄວາມຂຽວງາມ ແລະ ຍືນຍົງ. ໂດຍຮັກສາລະດັບການເຕີບໂຕຂອງກະສິກຳ 2,5 % ຕໍ່ປີ ແລະ ປະກອບສ່ວນໃນ (GDP) ລວມຍອດຜະລິດຕະພັນພາຍໃນ 15,3% ໃນນັ້ນ:

- ການເຕີບໂຕຂອງການປູກຝັງ 1,2-1,4 % ຕໍ່ປີ; ປະກອບສ່ວນສະເລັ່ຍໃນລວມຍອດຜະລິດຕະພັນກະສິກຳ 11,5 -11,7%.
- ການຂະຫຍາຍຝູງສັດຢູ່ໃນລະດັບ 3-4 % ຕໍ່ປີ, ໃນນັ້ນ (ຄວາຍ 1%, ງົວ 3%, ໝູ 4%, ແກະ/ແບ້ 5% ແລະ ສັດປີກ 5%); ປະກອບສ່ວນສະເລັ່ຍໃນລວມຍອດຜະລິດຕະພັນກະສິກຳ 2,2-2,3%
- ການລ້ຽງປາ ແລະ ສັດນ້ຳ ຂະຫຍາຍ 3-4 % ຕໍ່ປີ; ປະກອບສ່ວນສະເລັ່ຍໃນລວມຍອດຜະລິດຕະພັນກະສິກຳ 2,3-2,4%.
- ການຂະຫຍາຍໂຕ ຂອງ ຂະແໜງປ່າໄມ້ 1,5%.
- ມູນຄ່າການສົ່ງອອກພືດ 1,2 ຕື້ໂດລາຕໍ່ປີ;
- ການບໍລິໂພກທາດຊີ້ນ 73 ກິໂລ/ຄົນ/ປີ ໃນປີ 2025
- ສົ່ງງົວອອກໄດ້ 200.000 ໂຕ.
- ເນື້ອທີ່ປົກຫຸ້ມປ່າໄມ້ 70% ໃນປີ 2025.
- ສ້າງເມືອງພົ້ນທຸກ ໃຫ້ໄດ້ 69 ເມືອງ ໃນທົ່ວປະເທດ (ເພີ່ມຂຶ້ນ ຈາກ 53 ເມືອງ ມາເປັນ 122 ເມືອງ);

ເພື່ອໃຫ້ມີຄວາມສອດຄ່ອງໃນການຈັດຕັ້ງຜັນຂະຫຍາຍຕາມ 6 ເປົ້າໝາຍໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ຂອງລັດຖະບານ; ຂະແໜງ ກະສິກໍາ, ປ່າໄມ້ ໄດ້ສຸມໃສ່ 3 ຂົງເຂດ ເປັນຕົ້ນແມ່ນ ກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ **ໂດຍມີ 4 ແຜນງານ ແລະ 13 ວຽກສະໜັບສະໜູນ** ດັ່ງຕໍ່ໄປນີ້:

**4 ແຜນງານ ປະກອບມີ:**

1) ແຜນງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ.
2) ແຜນງານຜະລິດກະສິກໍາເປັນສິນຄ້າ
3) ແຜນງານຄຸ້ມຄອງ ປົກປັກຮັກສາປ່າໄມ້
4) ແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

# ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີຄັ້ງທີ IX (2021-2025)

## 1. ແຜນງານຄ້ຳປະກັນສະບຽງອາຫານ.

- ➢ ສູ້ຊົນຜະລິດເຂົ້າໃຫ້ໄດ້ເນື້ອທີ່ 900.000-950.000 ເຮັກຕາ, ຜົນຜະລິດໃຫ້ໄດ້ 3,5-4,0 ລ້ານໂຕນ/ປີ, ໃນນັ້ນ ແຮໄວ້ເພື່ອຄ້ຳປະກັນສະບຽງອາຫານພາຍໃນ 2,5 ລ້ານໂຕນຕໍ່ປີ; ເຂົ້າແຮໄວ້ 400.000 ໂຕນ, ແນວພັນ 100.000 ໂຕນ. ເພື່ອບໍລິໂພກພາຍໃນ ແລະ ເປັນສິນຄ້າສົ່ງອອກ 900.000

- ➢ ສູ້ຊົນຜະລິດພືດ ສະບຽງອາຫານ ປະມານ 261.710 ເຮັກຕາ, ຜົນຜະລິດ 2,1 ລ້ານໂຕນ.

- ➢ ການລ້ຽງສັດ ແລະ ປະມົງ

- ສູ້ຊົນຜະລິດ ຊີ້ນ, ໄຂ່ ແລະ ປາ ໃຫ້ໄດ້ 577.000 ໂຕນ
- ເຮັດໃຫ້ອັດຕາການບໍລິໂພກ ບັນລຸໄດ້ 73 ກິໂລ/ຄົນ/ປີ.
- ຂະຫຍາຍຝູງສັດ ໃຫ້ໄດ້ 3-4% ຕໍ່ປີ (ຄວາຍ 1%, ງົວ 3%, ໝູ 4%, ແກະ/ແບ້ 5% ແລະ ສັດປີກ 5%),
- ຜະລິດນ້ຳນົມງົວ ໃຫ້ໄດ້ 70.000 ໂຕນ,
- ຜະລິດແລະ ສະໜອງລູກປາ ໃຫ້ບັນລຸ 70% ຂອງ ຄວາມຕ້ອງການ ຫຼື 350 ລ້ານໂຕ/ປີ.



## 2. ແຜນງານຜະລິດກະສິກຳເປັນສິນຄ້າ

- ສູ້ຊົນຜະລິດພືດ ແລະ ສັດ ເປັນສິນຄ້າສົ່ງອອກ ໃຫ້ບັນລຸ 1,2 ຕື້ໂດລາ, ໃນນັ້ນ:
  - ພືດໃຫ້ບັນລຸ 1,1 ຕື້ໂດລາຕໍ່ປີ ຫຼື 5,5 ຕື້ໂດລາ ໃນໄລຍະ 5 ປີ ແຕ່ 2021-2025.
  - ສັດໃຫ້ບັນລຸ 0,1 ຕື້ໂດລາຕໍ່ປີ ຫຼື 0,5 ຕື້ໂດລາ ໃນໄລຍະ 5 ປີ ແຕ່ 2021-2025.

- ສູ້ຊົນປູກພືດເປັນສິນຄ້າ ສະເລ່ຍຕໍ່ປີໃຫ້ບັນລຸດັ່ງນີ້:
  - ກາເຟ ໃຫ້ໄດ້ 175.500 ໂຕນ, ທຽບໃສ່ປີ 2020 ເພີ່ມຂຶ້ນ 17.310 ໂຕນ ຫຼື ປະມານ 10,94%;
  - ສາລີອາຫານສັດ 636.900 ໂຕນ, ທຽບໃສ່ປີ 2020 ເພີ່ມຂຶ້ນ 118.774 ໂຕນ ຫຼື ປະມານ 22,92%;
  - ມັນຕົ້ນ 3,6 ລ້ານໂຕນ, ທຽບໃສ່ໄລຍະແຕ່ ປີ 2016-2020 ເຫັນວ່າເພີ່ມຂຶ້ນ 400.000 ໂຕນ;
  - ອ້ອຍ 1,6 ລ້ານໂຕນ, ທຽບໃສ່ປີ 2020 ເພີ່ມຂຶ້ນ 400.000 ກວ່າໂຕນ ຫຼື ປະມານ 34,31%;
  - ກ້ວຍ 735.500 ໂຕນ, ທຽບໃສ່ປີ 2020 ເພີ່ມຂຶ້ນ 14.396 ໂຕນ ຫຼື ປະມານ 1,99%.

- ສູ້ຊົນຜະລິດງົວ ເພື່ອສົ່ງອອກ ສປ ຈີນ ໃຫ້ໄດ້ 250.000 ໂຕ ຫຼື 50.000 ໂຕຕໍ່ປີ, ຜະລິດນ້ຳນົມງົວ ໃຫ້ໄດ້ 50.000 ໂຕນຕໍ່ປີ.
- ການຂະຫຍາຍຝູງສັດ ຢູ່ໃນລະດັບ 34%ຕໍ່ປີ, ໃນນັ້ນ: ຄວາຍ 1%, ງົວ 3%, ໝູ 4%, ແກະແບ້ 5%, ສັດປີ 5%. ສະໜອງ ຊີ້ນ ແລະ ໄຂ່ ໃຫ້ໄດ້ 340.000 ໂຕນ ຫຼື ເພີ່ມຂຶ້ນ 7,8% ທຽບໃສ່ປີ 2020.
- ການລ້ຽງປາ ແລະ ສັດນ້ຳ ຂະຫຍາຍ 34% ຕໍ່ປີ ຫຼື ສະໜອງ ປາ ແລະ ສັດນ້ຳ ໃຫ້ບັນລຸ 237.000 ໂຕນ ຫຼື ເພີ່ມຂຶ້ນ 8,4% ທຽບໃສ່ປີ 2020.

## 2. ແຜນງານຜະລິດກະສິກຳເປັນສິນຄ້າ

ຊຶ່ງແຕ່ລະແຂວງ ຕ້ອງໄດ້ກຳນົດ ລາຍການສິນຄ້າ ກະສິກຳ ທີ່ເປັນທ່າແຮງ ຂອງຕົນ ເພື່ອສ້າງແຜນໃນການສົ່ງເສີມການ ຜະລິດ ໂດຍສະເພາະ ແມ່ນ ສົ່ງເສີມການລົງທຶນ ຂອງຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ເປັນເຊັ່ນ:




**ແຂວງ ຫຼວງນ້ຳທາ:**
1. ຢາງພາລາ
2. ໝາກໂມ
3. ມັນຕົ້ນ
4. ໝາກອຶ
5. ອ້ອຍ

**ແຂວງ ຫຼວງພະບາງ:**
1. ໝາກເດືອຍ
2. ກ້ວຍຫອມ
3. ຢາສູບ
4. ຢາງພາລາ
5. ໄມ້ສັກ
6. ໝາກໂມ ແລະ ອື່ນໆ

**ແຂວງ ຜົ້ງສາລີ:**
1. ມັນດ້າງ
2. ໝາກກ້ວຍ
3. ຊາຕົ້ນນ້ຳ
4. ກາເຟ
5. ໝາກແໜ່ງ
6. ຢາງພາລາ
7. ສັດໃຫຍ່
8. ເຄື່ອງປ່າຂອງດົງ

**ແຂວງ ບໍ່ແກ້ວ:**
1. ຢາງພາລາ
2. ໝາກໄມ້ (ໝາກມ່ວງ, ໝາກພຸກ)
3. ສາລີແຂງ

**ແຂວງ ຫົວພັນ:**
1. ເຂົ້າໄກ່ນ້ອຍ
2. ກາເຟ
3. ສັດໃຫຍ່
4. ເຄື່ອງປ່າຂອງດົງ
5. ໝາກໄມ້

**ແຂວງ ອຸດົມໄຊ:**
1. ສາລີແຂງ
2. ກ້ວຍຫອມ
3. ໝາກເຜັດນ້ອຍ
4. ຖົ່ວເບີ
5. ມັນດ້າງ
6. ອື່ນໆ

**ແຂວງ ໄຊຍະບູລີ:**
1. ພືດຜັກ
2. ໝາກໄມ້
3. ສາລີຫວານ
4. ເຜືອກມັນ
5. ສັດລ້ຽງ
6. ອື່ນໆ

**ແຂວງ ວຽງຈັນ:**
1. ສາລີແຂງ
2. ສາລີຫວານ
3. ພືດຜັກສະອາດ
4. ໝູ
5. ງົວ
6. ອື່ນໆ

**ແຂວງ ຊຽງຂວາງ:**
1. ເຂົ້າໄກ່ນ້ອຍ
2. ກາເຟ
3. ຊາ
4. ສາລີແຂງ
5. ໝາກເຜັດ, ກະທຽມ

## 2. ແຜນງານຜະລິດກະສິກຳເປັນສິນຄ້າ

ຊຶ່ງແຕ່ລະແຂວງ ຕ້ອງໄດ້ກຳນົດ ລາຍການສິນຄ້າ ກະສິກຳ ທີ່ເປັນທ່າແຮງ ຂອງຕົນ ເພື່ອສ້າງແຜນໃນການສົ່ງເສີມການຜະລິດ ໂດຍສະເພາະ ແມ່ນ ສົ່ງເສີມການລົງທຶນ ຂອງຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ເປັນເຊັ່ນ:

**ນະຄອນຫຼວງວຽງຈັນ:** ຜັກອິນຊີ, ສາລີແຂງ, ມັນຕົ້ນ, ສັດໃຫຍ່ (ງົວ), ໝູ ແລະ ສັດປີກ

**ແຂວງໄຊສົມບູນ:** ພືດຜັກ, ໝາກກ້ຽງ, ມັນຕົ້ນ, ໝາກມັດ ແລະ ສັດໃຫຍ່.

**ແຂວງບໍລິຄຳໄຊ:** ໝາກກ້ວຍ, ໝາກມ່ວງ, ມັນຕົ້ນ, ໝາກພຸກ, ໝູ ແລະ ປາ.

**ແຂວງສຫວັນນະເຂດ:** ເຂົ້າ, ມັນຕົ້ນ, ອ້ອຍ, ກ້ວຍນ້ຳບ້າ, ໄມ້ວິກ, ງົວ ແລະ ໝູ

**ແຂວງຄຳມ່ວນ:** ເຂົ້າ, ມັນຕົ້ນ, ໝູ, ງົວ ແລະ ຢາງພາລາ.

**ແຂວງສາລະວັນ:** ເຂົ້າ, ກາເຟ, ມັນຕົ້ນ, ສາລີແຂງ ແລະ ໝາກກ້ວຍ.

**ແຂວງຈຳປາສັກ:** ເຂົ້າ, ກາເຟ, ພືດຜັກ, ສັດໃຫຍ່ ແລະ ຢາງພາລາ.

**ແຂວງ ເຊກອງ:** ມັນຕົ້ນ, ຢາງພາລາ, ກາເຟ, ກ້ວຍ ແລະ ໝາກໄມ້.

**ແຂວງ ອັດຕະປື:** ອ້ອຍ, ຢາງພາລາ, ກ້ວຍ, ສັດໃຫຍ່ ແລະ ສັດປີກ.



## 3. ແຜນງານຄຸ້ມຄອງ ປົກປັກຮັກສາປ່າໄມ້

- ສູ້ຊົນເຮັດໃຫ້ທີ່ດິນປ່າໄມ້ ກວມເອົາ 70% ຂອງເນື້ອທີ່ທົ່ວປະເທດ, ຍົກລະດັບຄວາມປົກຫຸ້ມຂອງປ່າໄມ້ ບໍ່ໃຫ້ຫຼຸດ 70% ຂອງເນື້ອທີ່ທົ່ວປະເທດ;
- ຢຸດຕິການຄ້າຂາຍ, ການນຳເຂົ້າສົ່ງອອກ ແລະ ສົ່ງຜ່ານ ສັດປ່າພືດປ່າ ທີ່ຫາຍາກ, ຜິດກົດໝາຍ ແລະ ບໍ່ສອດຄ່ອງກັບ ສົນທິສັນຍາສາກົນ CITES;
- ຍົກລະດັບປ່າສະຫງວນແຫ່ງຊາດ ຂຶ້ນເປັນອຸທິຍານແຫ່ງຊາດ ໃຫ້ໄດ້ 5 ແຫ່ງ,
- ຟື້ນຟູປ່າ ໃນເນື້ອທີ່ 1,8 ລ້ານເຮັກຕາ ແລະ ປູກໄມ້ເພື່ອເປັນສິນຄ້າ ໃຫ້ໄດ້ທັງໝົດ 200.000 ເຮັກຕາ ເພື່ອໃຫ້ໄດ້ໄມ້ ປະມານ 25 ລ້ານ ແມັດກ້ອນ ເປັນເງື່ອນໄຂຄໍ້າປະກັນ ການສະໜອງວັດຖຸດິບ ປ້ອນໂຮງງານອຸດສາຫະກຳໄມ້ພາຍໃນປະເທດ ແລະ ຫຼຸດຜ່ອນການນຳເຂົ້າໄມ້ປູກຈາກຕ່າງປະເທດ;
- ເຈລະຈາຄ້າຂາຍກາກບອນປ່າໄມ້ ບໍ່ໃຫ້ຫຼຸດ 95 ລ້ານໂດລາສະຫະລັດ; ດຶງດູດການລົງທຶນໃຫ້ໄດ້ ຢ່າງຕ່ຳ 200 ລ້ານໂດລາສະຫະລັດ.

- **ການກວດກາປ່າໄມ້**
- ສືບຕໍ່ປັບປຸງລະບົບການກວດກາ ແລະ ການດຳເນີນຄະດີ ກ່ຽວກັບຊັບພະຍາກອນປ່າໄມ້ ໃຫ້ມີຄວາມເຂັ້ມ,
- ປະສານສົມທົບຢ່າງແໜ້ນແຟ້ນກັບທ້ອງຖິ່ນ ເພື່ອປຸກ ລະດົມຂົນຂວາຍ ໃຫ້ປວງຊົນເຂົ້າຮ່ວມ ໃນວຽກງານຕ້ານ ແລະ ສະກັດກັ້ນການລັກລອບຊັບ ພະຍາກອນປ່າໄມ້ຫລຸດລົງ 25%, ລັກລອບລ່າສັດ, ຊື້-ຂາຍ ສັດນ້ຳ-ສັດປ່າ ໃຫ້ໄດ້ 1.500 ບ້ານ ແລະ ຄະດີປ່າໄມ້ຫລຸດລົງ 30% ເພື່ອແນ່ໃສ່ ເພີ່ມຄວາມປົກຫຸ້ມຂອງປ່າໄມ້ໃຫ້ໄດ້ 70% ຕາມຍຸດທະສາດປ່າໄມ້ ໄດ້ກຳນົດໄວ້.

## 4. ແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

- ສູ້ຊົນ ສ້າງຄອບຄົວພົ້ນທຸກໃຫ້ໄດ້ 204.360 ຄອບຄົວ ໃນທົ່ວປະເທດ (ເພີ່ມຂຶ້ນຈາກ 964.149 ຄອບຄົວ ມາເປັນ 1.168.509 ຄອບຄົວ);
- ສ້າງບ້ານພົ້ນທຸກ ໃຫ້ໄດ້ 3.104 ບ້ານ ໃນທົ່ວປະເທດ (ເພີ່ມຂຶ້ນຈາກ 4.767 ບ້ານ ມາເປັນ 7.871 ບ້ານ;
- ສ້າງເມືອງພົ້ນທຸກ ໃຫ້ໄດ້ 69 ເມືອງ ໃນທົ່ວປະເທດ (ເພີ່ມຂຶ້ນ ຈາກ 53 ເມືອງ ມາເປັນ 122 ເມືອງ);
- ສູ້ຊົນສ້າງຄອບຄົວພັດທະນາ ໃຫ້ໄດ້ 245.754 ຄອບຄົວ ໃນທົ່ວປະເທດ (ເພີ່ມຂຶ້ນຈາກ 736.996 ຄອບຄົວ ມາເປັນ 982.750 ຄອບຄົວ)
- ສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ໃນເຂດຈຸດສຸມ ໃຫ້ໄດ້ ຈໍານວນ 2 ບ້ານ ຕໍ່ປີ.
- ຮອດປີ 2025 ສ້າງຈຸດສຸມຕົວແບບພັດທະນາຊົນນະບົດໃໝ່ ໃຫ້ໄດ້ 20 ຈຸດສຸມ,
- ຈັດສັນພູມລໍາເນົາຄົງທີ່ ແລະ ອາຊີບທີ່ໝັ້ນຄົງ ໃຫ້ປະຊາຊົນ ຢູ່ 25 ຈຸດສຸມ,
- ສ້າງ ແລະ ປັບປຸງ ກຸ່ມການຜະລິດໃຫ້ໄດ້ 4.420 ກຸ່ມ, ໃນນັ້ນ ໃຫ້ເປັນຕົວແບບ 250 ກຸ່ມ ແລະ ສ້າງສະຫະກອນ 22 ຫົວໜ່ວຍ.

## 5. ບັນດາ ວຽກສະໜັບສະໜູນ ປະກອບມີ:

5.1 ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ແລະ ຝຸ່ນ
5.2 ການພັດທະນາຊົນລະປະທານ-ຊົນລະກະເສດ
5.3 ການຄົ້ນຄວ້າ ແລະ ຂະຫຍາຍແນວພັນ ພືດ, ສັດ, ປາ, ໄມ້ ແລະ ໄມ້ໃຫ້ໝາກ
5.4 ການຖ່າຍທອດເຕັກນິກ ເຕັກໂນໂລຊີ ກ່ຽວກັບການປູກ, ການລ້ຽງ ແລະ ການປຸງແຕ່ງ
5.5 ການປັບປຸງຮູບແບບການຜະລິດ
5.6 ວຽກງານປ້ອງກັນ ແລະ ກັກກັນພືດ
5.7 ວຽກງານກະສິກຳສະອາດ
5.8 ການສ້າງຄວາມສາມາດ ໃນການຫຼຸດຜ່ອນຄວາມສ່ຽງ ຈາກໄພພິບັດທຳມະຊາດ
5.9 ວຽກງານນະໂຍບາຍ ແລະ ນິຕິກຳ
5.10 ວຽກງານກວດກາ
5.11 ວຽກງານປັບປຸງການຈັດຕັ້ງ ແລະ ພັດທະນາຊັບພະຍາກອນມະນຸດ
5.12 ການຮ່ວມມືກັບຕ່າງປະເທດ
5.13 ການເຊື່ອມໂຍງຂໍ້ມູນຂ່າວສານ ດ້ານການຜະລິດ ແລະ ການຕະຫຼາດ

## ມາດຕະການຈັດຕັ້ງປະຕິບັດ ໃນການຄ້ຳປະກັນສະບຽງອາຫານ

ຜັນຂະຫຍາຍຄາດໝາຍສູ້ຊົນ ຂອງແຜນການ 5 ປີ ຄັ້ງທີ IX ໃຫ້ເປັນແຜນວຽກ, ແຜນຄົນ ແລະ ແຜນເງິນ ຕາມພາລະບົດບາດຂອງຕົນ ໂດຍໃຫ້ມີຈຸດປະສົງຄາດໝາຍ, ກິດຈະກຳ ແລະ ແຜນງົບປະມານ ເປັນໄລຍະ 3 ປີ, 5 ປີ ແລະ ແຜນປະຕິບັດໃນແຕ່ລະປີ, ຕາມຂອບ ການຄຸ້ມຄອງ ການລົງທຶນຂອງລັດ.

1. ຈັດຕັ້ງເຜີຍແຜ່ເຊື່ອມຊຶມ ແນວທາງນະໂຍບາຍ, ມະຕິຄຳສັ່ງ ແລະ ບັນດານິຕິກຳ ໃຫ້ພາກລັດ, ຫົວໜ່ວຍທຸລະກິດ, ຜູ້ປະກອບການ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຕະຫຼອດຮອດປະຊາຊົນ ໃຫ້ເຂົ້າໃຈຢ່າງເລິກເຊິ່ງ.
2. ຄົ້ນຄວ້າສ້າງ, ປັບປຸງ ນິຕິກຳ ແລະ ນະໂຍບາຍໃຫ້ເປັນລະບົບຄົບຊຸດ ເປັນບ່ອນອີງໃຫ້ແກ່ການຄຸ້ມຄອງມະຫາພາກ ເພື່ອກະຕຸກຊຸກຍູ້ ແລະ ສົ່ງເສີມການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຫຼາຍຂຶ້ນ.
3. ປັບປຸງໂຄງປະກອບການຜະລິດກະສິກຳ ຕາມທ່າແຮງບົ່ມຊ້ອນທີ່ໄດ້ປຽບ, ປັບປຸງການຈັດຕັ້ງການຜະລິດ, ກຳລັງການຜະລິດ ແລະ ການພົວພັນການຜະລິດ ໃຫ້ກົມກຽວ, ຫັນພະນັກງານສົ່ງເສີມລົງສູ່ຈຸດສຸມ, ເຂດການຜະລິດ, ເຂດ 3 ປະເພດປ່າ ເພື່ອນຳພາປະຊາຊົນ ປູກ-ລ້ຽງ ດ້ວຍການນຳໃຊ້ເຕັກນິກ ເຕັກໂນໂລຢີ ກະສິກຳ ສະໄໝໃໝ່ເຂົ້າໃນການຜະລິດ.

**ມາດຕະການຈັດຕັ້ງປະຕິບັດ**

4. ເພີ່ມທະວີການຮ່ວມມື ແລະ ຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ, ດ້ານວິຊາການ ເພື່ອການພັດທະນາ ໂດຍສະເພາະ ສຸມໃສ່ລົງສູ່ທ້ອງຖິ່ນ, ຊຸກຍູ້ຍົກລະດັບ ການພັດທະນາ ກະສິກຳ, ປ່າໄມ້ ແລະ ຊົນນະບົດແກ້ໄຂຄວາມທຸກຍາກ ຕາມທິດສາມສ້າງ ແລະ ມີຈຸດສຸມ.
5. ເອົາໃຈໃສ່ ຈັດຕັ້ງປະຕິບັດກົດໝາຍ ທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂ ບໍລິການ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນໃສ່ຂະແໜງ ກະສິກຳ-ປ່າໄມ້ ຂອງ ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ນັບມື້ນັບຫຼາຍຂຶ້ນ ພ້ອມທັງ ເຮັດໃຫ້ການລົງທຶນດັ່ງກ່າວ ຕິດພັນກັບການສ້າງອາຊີບ ໃຫ້ຊາວກະສິກອນ ມີລາຍຮັບ ທີ່ໝັ້ນຄົງ.
6. ຕິດຕາມ, ກວດກາ ແລະ ປະເມີນຜົນ, ສະຫຼູບສັງລວມ, ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການ ເພື່ອໃຫ້ເຫັນໄດ້ ຜົນປະໂຫຍດ ແລະ ຜົນໄດ້ຮັບ ຂອງ ບັນດາກິດຈະກຳ ທີ່ປະຕິບັດໃນແຕ່ລະໄລຍະ ບົນພື້ນຖານການຕີລາຄາ ຄວາມສອດຄ່ອງ, ປະສິດທິພາບ, ປະສິດທິຜົນ, ຜົນປະໂຫຍດ ແລະ ຄວາມຍືນຍົງ.

# ຂໍຂອບໃຈ





